# ຫຼາກຫຼາຍວິທີໃນການເບິ່ງເສັ້ນອາຍັນເໜືອຢູ່ມົ້ວຈຽງ

ເມືອງປົກຄອງຕົນເອງເຜົ່າຮານີ ມົ້ວຈ່ຽງ ແມ່ນເມືອງປົກຄອງຕົນເອງເຜົ່າຮານີແຫ່ງດຽວໃນປະເທດຈີນ, ເຊິ່ງເປັນທີ່ຮູ້ຈັກກັນວ່າ "ບ່ອນທີ່ດວງອາທິດຫັນໜ້າໄປ"ເພາະວ່າເສັ້ນອາຍັນເໜືອ (Tropic of Cancer) ຜ່ານເມືອງ. ອັດຕາການເກີດຂອງຄູ່ແຝດຢູ່ທີ່ນີ້ແມ່ນຂ້ອນຂ້າງສູງ ແລະ ມັນຍັງເປັນທີ່ຮູ້ຈັກກັນວ່າ "ເມືອງຄູ່ແຝດ".

ຍ້ອນວ່າມີເສັ້ນອາຍັນເໜືອນີ້ທີ່ຜ່ານເມືອງ, ປະຊາຊົນມົ້ວຈ່ຽງ ຈຶ່ງຖືວ່າເປັນຕົ້ນກຳເນີດຂອງຊີວິດຂອງທຸກສິ່ງທຸກຢ່າງ "ເປັນຄູ່" - ອັດຕາການເກີດສູງຂອງຄູ່ແຝດ, ຜູ້ເຖົ້າຜູ້ແກ່ໃນທ້ອງຖິ່ນຖືວ່າ "ດວງອາທິດກັບຄືນມາເມື່ອເຖິງຈຸດນີ້", ແລະ ພະລັງຢາງ (ທາງບວກ) ແຜ່ອານຸພາບສູງສຸດ; ການປູກຝັງ ແລະ ງານບຸນຕ່າງໆຂອງຊົນເຜົ່າຮານີ ເປັນເວລາຫຼາຍພັນປີ ກໍໄດ້ ດຳເນີນໄປຢ່າງສອດຄ່ອງກັບວັດຖະຈັກຂອງດວງອາທິດ. ຢູ່ທີ່ນີ້, ງານບຸນຄູ່ແຝດສາກົນທີ່ຈັດຂຶ້ນທຸກໆປີໄດ້ປ່ຽນເສັ້ນອາຍັນເໜືອຈາກແນວຄິດນາມມະທຳໄປສູ່ການເຕົ້າໂຮມ "ຄູ່" ທີ່ອົບອຸ່ນຫົວໃຈຂອງຝາແຝດຢ່າງແທ້ຈິງ. ໃນງານບຸນຄູ່ແຝດປີນີ້, ຄູ່ແຝດທີ່ມາຈາກປະເທດຈີນ, ຫວຽດນາມ, ໄທ ແລະ ປະເທດອື່ນໆໄດ້ກິນອາຫານປະເພດດຽວກັນ, ດື່ມເຫຼົ້າຊະນິດດຽວກັນ, ຮ້ອງເພງບົດດຽວກັນ, ເຮັດໃຫ້ເສັ້ນອາຍັນເໜືອ ກາຍເປັນສາຍສຳພັນທີ່ເຊື່ອມຕໍ່ຜູ້ຄົນກ້າວຂ້າມອາລິຍະທຳ.







## ຊີວິດທີ່ເພີ່ມຂື້ນທະວີຄູນ

ສຳລັບໂລກພາຍນອກ ພາບຄວາມປະທັບໃຈທີ່ເຫັນໄດ້ໂດຍກົງຕໍ່ກັບມົ້ວຈ່ຽງ, ກໍໜ້າຈະແມ່ນເລື່ອງຂອງຝາແຝດ. ທົ່ວເມືອງມີຝາແຝດທີ່ຂຶ້ນທະບຽນມີຫຼາຍກວ່າພັນຄູ່, ອັດຕາສ່ວນດັ່ງກ່າວສູງກວ່າຄ່າສະເລ່ຍຂອງຈີນຢ່າງຈະແຈ້ງ. ທຸກໆປີ ໃນໄລຍະເທດສະການຝາແຝດສາກົນ, ຄອບຄົວທີ່ມີຝາແຝດຈາກທຸກຫົນແຫ່ງໃນທົ່ວໂລກຈະມາລວມກັນຢູ່ທີ່ນີ້, ເທິງຖະໜົນຫົນທາງທຸກບ່ອນໃນເມືອງແຫ່ງນີ້ ຈະເຕັມໄປດ້ວຍໃບໜ້າທີ່ເປັນຄູ່ຄ້າຍໆກັນ, ສ້າງຄວາມໂດດເດັ່ນຕໍ່ສາຍຕາຫຼາຍ.

ກ່ຽວກັບສາເຫດການເກີດຂຶ້ນຂອງປາກົດການນີ້, ໃນວົງການວິທະຍາສາດ ຍັງບໍ່ມີຂໍ້ສະຫຼຸບທີ່ແນ່ນອນ. ມີທັງການເວົ້າເຖິງແຮ່ທາດໃນນ້ຳ, ການເວົ້າເຖິງການຖ່າຍທອດທາງກຳມະພັນ, ການເວົ້າເຖິງອາຫານການກິນ, ເຊິ່ງລ້ວນແຕ່ມີເຫດຜົນຂອງຕົນເອງ, ຍັງຕ້ອງລໍຖ້າການພິສູດອີກຂັ້ນຕໍ່ໄປ. ແຕ່ວ່າ ໃນຊີວິດການເຮັດວຽກປະຈຳວັນຂອງຂ້ອຍ, ໄດ້ສຳຜັດກັບການອະທິບາຍຂອງປະຊາຊົນທີ່ໜ້າສົນໃຈ ຢູ່ສະເໝີ, ຜູ້ເຖົ້າໃນທ້ອງຖິ່ນຈຳນວນຫຼາຍ ຈະບອກໂດຍບໍ່ລັ່ງເລວ່າ ປາກົດການຝາແຝດ ເກີດຈາກ "ເສັ້ນນີ້". ໃນຄວາມເຂົ້າໃຈຂອງພວກເຂົາ, ຕາເວັນເມື່ອມາຮອດຈຸດນີ້ ແລ້ວກໍຫັນກັບ, ຢູ່ບ່ອນນີ້ຈຶ່ງແມ່ນບ່ອນທີ່ມີພະລັງຢາງຂອງຟ້າດິນທີ່ເຂັ້ມທີ່ສຸດ, ພະລັງຂອງຊີວິດກໍອຸດົມສົມບູນເປັນພິເສດ, "ອັນໃດກໍຈະມັກມາເປັນຄູ່".

ຂ້ອຍບໍ່ໄດ້ມີຄວາມໝາຍວ່າຈະນຳເອົາເລື່ອງເລົ່າຂອງຊາວບ້ານມາໃຊ້ແທນຄຳອະທິບາຍທາງວິທະຍາສາດ, ແຕ່ວ່າ ຂ້ອຍຄິດວ່າ ວິທີການເລົ່າຊຸດນີ້ກໍຄວນທີ່ຈະໄດ້ຮັບການພິຈາລະນາຢ່າງຈິງຈັງ. ສິ່ງທີ່ສະທ້ອນອອກມາແມ່ນ "ຄວາມຮູ້ສຶກຜູກພັນກັບສະຖານທີ່" ທີ່ເປັນຄວາມຮູ້ສຶກຂອງການຄົງຢູ່ກັບທ້ອງຖິ່ນ ແລະ ຜູກພັນກັບຮ່າງກາຍຕົນໂຕ, ຜູ້ຄົນບໍ່ໄດ້ເຂົ້າໃຈເສັ້ນຂະໜານເສັ້ນໜຶ່ງເປັນພູມສາດນາມມະທຳ, ແຕ່ໃຊ້ປະສົບການຊີວິດທີ່ຕິດພັນກັບຮ່າງກາຍຂອງຕົນເອງທີ່ສຸດ ເຊັ່ນ ການຖືພາ, ການເກີດລູກ, ການລ້ຽງດູ ແລະ ອື່ນໆ ເພື່ອ "ຮັບຮູ້" ຄວາມພິເສດຂອງຜືນແຜ່ນດິນນີ້ທີ່ຕົນເອງຢືນຢູ່. ຝາແຝດ ບໍ່ພຽງແຕ່ແມ່ນປາກົດການສະຖິຕິປະຊາກອນຂອງຄົນຜູ້ໜຶ່ງ, ມັນຖືກສັງຄົມທ້ອງຖິ່ນຈັດເຂົ້າໄປໃນເລື່ອງເລົ່າຂອງຊາວບ້ານ ທີ່ກ່ຽວຂ້ອງກັບຄວາມອຸດົມສົມບູນ, ກ່ຽວກັບຕາເວັນ ແລະ ກ່ຽວກັບພະລັງຂອງຊີວິດ. ສ່ວນວ່າ ເສັ້ນອາຍັນເໜືອ, ກໍມີພາບພົດເປັນສູນກາງຂອງເລື່ອງເລົ່າຊຸດນີ້.

ດ້ວຍເຫດນັ້ນ ເສັ້ນນີ້ ກໍມີຄວາມໝາຍແຝງວ່າ "ເສັ້ນແຫ່ງຊີວິດ".

## ສະຖານທີ່ຢູ່ອາໄສຂອງດວງຕາເວັນ

ມົ້ວຈ່ຽງ ແມ່ນເມືອງປົກຄອງຕົນເອງເຜົ່າຮານີ ໜຶ່ງດຽວໃນປະເທດຈີນ. ໃນການເຄົາລົບບູຊາດວງຕາເວັນຂອງບັນດາຊົນເຜົ່າທັງຫຼາຍທີ່ຢູ່ໃນເຂດຕາເວັນຕົກສ່ຽງໃຕ້ຂອງຈີນ, ຊົນເຜົ່າຮານີ ມີຄວາມເຊື່ອທີ່ເຂັ້ມຂຸ້ນເປັນພິເສດ.

ການເຄົາລົບບູຊານີ້ ບໍ່ສາມາດເຂົ້າໃຈງ່າຍໆວ່າເປັນພຽງເຄື່ອງໝາຍສັນຍະລັກທີ່ລອຍໄປມາໃນເທບນິຍາຍ, ມັນຝັງເລິກຢູ່ໃນລະບົບເຕັກນິກທັງໝົດຂອງການດຳລົງຊີວິດ ແລະ ການຜະລິດ. ເຜົ່າຮານີ ມີປະຕິທິນສຸລິຍະຄະຕິເປັນຂອງຕົນເອງ, ໂດຍກຳນົດລຳດັບເດືອນຈາກການປ່ຽນແປງຂອງສິ່ງມີຊີວິດ ແລະ ການເຄື່ອນໄຫວຂອງດວງຕາເວັນ, ປີໜຶ່ງມີ 13 ເດືອນ, ທຸກເດືອນ 13 ມື້, ມື້ທີ່ເຫຼືອຈະນັບເປັນປີໃໝ່. ການຫັນທິດທາງຂອງນາຂັ້ນໄດ ກໍຈະໄດ້ຮັບການວາງແຜນຢ່າງແມ່ນຢຳຕາມຮູບແບບການສ່ອງຂອງແສງແດດ, ການເລືອກທີ່ຕັ້ງຂອງບ້ານກໍໃຫ້ຄວາມສຳຄັນໃນການເລືອກເອົາເນີນທີ່ຫັນໃສ່ຕາເວັນ, ຕັ້ງແຕ່ການຫວ່ານເມັດ ໄປຈົນຮອດການເກັບກ່ຽວທຸກໆຂອດລ້ວນແຕ່ຍຶດຕິດກັບຈັງຫວະການເຄື່ອນທີ່ຂອງດວງຕາເວັນ. "ບຸນປີໃໝ່ເດືອນສິບ" ແມ່ນບຸນທີ່ຍິ່ງໃຫຍ່ທີ່ສຸດ, ແກ່ນແທ້ຂອງພິທີການທີ່ກໍແມ່ນການຂອບໃຈແລະຕ້ອນຮັບດວງຕາເວັນ.

ໃນໄລຍະເວລາທີ່ຂ້ອຍເຮັດວຽກປະຈຳຢູ່ຊົນນະບົດ, ມັກຈະຢືນຢູ່ນາຂັ້ນໄດເບິ່ງ ຕາເວັນຂຶ້ນ. ແສງແດດຄ່ອຍໆ ແຜ່ອອກມາຈາກສັນພູ ທິດຕາເວັນອອກ, ສ່ອງໃສ່ຜືນນ້ຳໃຫ້ແຈ້ງສະຫວ່າງຂຶ້ນເທື່ອລະຊັ້ນ, ນອກຈາກພາບທິວທັດ, ກໍໄດ້ຮັບຮູ້ເຖິງວິຖີການເຄື່ອນໄຫວຂອງອະລິຍະທຳ. ຄົນຮານີ ບໍ່ໄດ້ໃຊ້ມຸມເສັ້ນຂະໜານເສັ້ນແວງມາເຮັດເຄື່ອງໝາຍໃຫ້ຕາເວັນ, ພວກເຂົາໃຊ້ເສັ້ນຄວາມສູງຂອງນາຂັ້ນໄດ, ໃຊ້ແກນເວລາຂອງເທດສະການ, ໃຊ້ການເລົ່າເລື່ອງຕາມຕຳນານ, ນຳເອົາເສັ້ນອາຍັນເໜືອມາ "ແປ" ໃຫ້ເປັນພາສາຂອງຕົນເອງ.

## ພີ່ນ້ອງທີ່ຢູ່ພູເບື້ອງນັ້ນ

ຊົນເຜົ່າຮານີ ກໍເປັນຕົວຢ່າງຂອງຊົນເຜົ່າທີ່ກະຈາຍກັນຂ້າມແດນ. ໃນຊາຍແດນຂອງຈີນ, ພວກເຂົາລວມໂຕກັນຢູ່ລະຫວ່າງ ພູອ່າຍຫຼາວ ແລະ ພູອູລຽງ; ຍິ່ງຜ່ານເສັ້ນຊາຍແດນປະເທດ, ພວກເຂົາປາກົດໂຕໃນຊື່ "ອາຄ່າ" ແລະ ກະຈາຍໃນເຂດພູຂອງຫວຽດນາມ, ລາວ, ມຽນມາ, ໄທ. ພາສາທີ່ສື່ສານກັນໄດ້, ພິທີການເຄົາລົບບູຊາຕາເວັນ ເກືອບວ່າຄືກັນ.ຮູບແບບການຂ້າມແດນທີ່ຄ້າຍໆກັນ ຍັງພົບເຫັນໄດ້ເລື້ອຍໆກັບຊົນເຜົ່າທັງຫຼາຍ ທາງທິດຕາເວັນຕົກສ່ຽງໃຕ້ຂອງຈີນ ເຊັ່ນ ເຜົ່າໄຕລື້, ເຜົ່າລາຮູ້, ເຜົ່າມົ້ງ ແລະ ອື່ນໆ.

ໃນເທດສະການຝາແຝດຂອງມົ້ວຈ່ຽງ, ຄົນອາຄ່າ ຈາກອາຊີຕາເວັນອອກສ່ຽງໃຕ້ ກໍເດີນທາງມາໄກ, ພວກເຂົາຮ່ວມກິນເຂົ້າໜຽວຊະນິດດຽວກັນກັບຄົນຮານີໃນທ້ອງຖິ່ນ, ດື່ມເຫຼົ້າເຂົ້າທີ່ໝັກດ້ວຍວິທີດຽວກັນ, ໃຊ້ເພງທຳນອງດຽວກັນຮ້ອງໂຕ້ຕອບກັນໄປມາ. ນີ້ບໍ່ແມ່ນພຽງ "ການແລກປ່ຽນວັດທະນະທຳສາກົນ", ແຕ່ແມ່ນການມາຢ້ຽມຢາມກັນຂອງພີ່ນ້ອງທີ່ຢູ່ຟາກພູເບື້ອງນັ້ນ ແລະ ເບື້ອງນີ້.

ເສັ້ນອາຍັນເໜືອທີ່ຢູ່ໃນລະດັບນີ້, ກໍບໍ່ແມ່ນພຽງເສັ້ນໝາຍກຳນົດທາງພູມສາດທຳມະຊາດອີກຕໍ່ໄປ. ມັນເຂົ້າໃກ້ກັບແລວທາງທີ່ເຊື່ອມໂຍງອະລິຍະທຳ, ລຽບໄປຕາມວົງໂຄຈອນຂີດສຸດຂອງການເຄື່ອນໄຫວຂອງດວງຕາເວັນ, ວັດທະນະທຳເຂດພູທີ່ມີຄວາມສຳພັນຂອງຍາດພີ່ນ້ອງເຊື່ອມໂຍງເຂົ້າຫາກັນ, ປະກອບກັນເປັນສາຍໃຍເຖິງຈະແນມບໍ່ເຫັນ ແຕ່ວ່າເປັນສາຍໃຍຂອງວັດທະນະທຳສັງຄົມທີ່ເຂັ້ມແຂງເປັນຢ່າງຍິ່ງ. ເສັ້ນນີ້ກໍຍັງມີຄວາມໝາຍ ວ່າເປັນ "ເສັ້ນແຫ່ງການຫຼອມລວມປະສົມປະສານ".

(ບົດໂດຍ: Li Yuyang, ບັນດິດສາຂາ ຊົນເຜົ່າໃນໂລກ ແລະ ບັນຫາຂອງຊົນເຜົ່າ ມະຫາວິທະຍາໄລຢຸນນານ)

(ສະໜອງຂໍ້ມູນໂດຍ: ວາລະສານ "ຈຳປາ" ທີ່ຂຶ້ນກັບ ສູນການສື່ສານສາກົນພາກພື້ນອາຊີໃຕ້-ອາຊີຕາເວັນອອກສ່ຽງໃຕ້ ແຂວງຢຸນນານ)

www.yunnangateway.com